ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳແນະນຳ

## ກ່ຽວກັບ ການດຳເນີນທຸລະກິດເມັດພັນພືດ



ຈັດພິມໂດຍ: ພະແນກລົງທຶນດ້ານການປູກຝັງ, ກົມປູກຝັງ

24 ພະຈິກ 2023

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ 4647 / ກປຝ
ນະຄອນຫລວງວຽງຈັນ, ວັນທີ 14 ພະຈິກ 2023

# ຄຳແນະນຳ
# ກ່ຽວກັບ ການດຳເນີນທຸລະກິດເມັດພັນພືດ

- ອີງຕາມ ດຳລັດ ວ່າດ້ວຍ ແນວພັນພືດ ສະບັບເລກທີ 238/ລບ ລົງວັນທີ 18 ພຶດສະພາ 2020;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປູກຝັງ, ສະບັບເລກທີ 0078/ກປ ລົງວັນທີ 12 ມັງກອນ 2022;
- ອີງຕາມ ໜັງສືສະເໜີ ຂອງພະແນກລົງທຶນດ້ານການປູກຝັງ ສະບັບເລກທີ 34/ລທຝ, ລົງວັນທີ 10 ມັງກອນ 2023.

ໃນໄລຍະຜ່ານມາ ການດຳເນີນທຸລະກິດເມັດພັນພືດ ໄດ້ປະກອບສ່ວນເຂົ້າໃນວຽກງານຄໍ້າປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ເພື່ອສົ່ງອອກ ແລະ ຈຳໜ່າຍພາຍໃນປະເທດ ເຮັດໃຫ້ວຽກງານກະສິກຳ ໄດ້ຮັບການພັດທະນາ ນັບມື້ນັບເພີ່ມຂຶ້ນເປັນກ້າວໆ, ແຕ່ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຜູ້ປະກອບການຈຳ

ນວນໜຶ່ງ ຍັງບໍ່ທັນເຂົ້າໃຈ ກ່ຽວກັບ ເງື່ອນໄຂ, ວິທີການ ແລະ ຂັ້ນຕອນ ການຂໍອະນຸຍາດດໍາເນີນທຸລະກິດດ້ານການຜະລິດເມັດພັນພືດ, ການນໍາເຂົ້າ, ສົ່ງອອກ, ສົ່ງອອກຕໍ່ ແລະ ສົ່ງຜ່ານເມັດພັນພືດ, ການຈໍາໜ່າຍເມັດພັນພືດ ແລະ ທຸລະກິດອື່ນ ທີ່ກ່ຽວກັບເມັດພັນພືດຍັງບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ການດໍາເນີນທຸລະກິດເມັດພັນພືດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການນັ້ນ,

**ກົມປູກຝັງ, ກະຊວງກະສິກໍາ ແລະ ປ່າໄມ້ ອອກຄໍາແນະນໍາ:**

## I. ຈຸດປະສົງ ແລະ ລະດັບຄາດໝາຍ.

**1.** ເພື່ອຈັດຕັ້ງຜັນຂະຫຍາຍ ໝວດທີ 7 ຂອງ ດໍາລັດ ວ່າດ້ວຍ ແນວພັນພືດ ທີ່ກໍານົດ ກ່ຽວກັບ ການດໍາເນີນທຸລະກິດເມັດພັນພືດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;

**2.** ເພື່ອກໍານົດ ຫຼັກການ, ເງື່ອນໄຂ, ວິທີການ ແລະ ຂັ້ນຕອນ ກ່ຽວກັບ ການອອກໃບອະນຸຍາດດໍາເນີນທຸລະກິດເມັດພັນພືດ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ;

**3.** ເພື່ອເປັນເຄື່ອງມືໃນການຄຸ້ມຄອງ, ການຊຸກຍູ້, ຕິດຕາມ, ກວດກາ ຂອງບັນດາຫົວໜ່ວຍທຸລະກິດ ການດໍາເນີນກິດຈະການດ້ານ ທຸລະກິດເມັດພັນພືດ ໃຫ້ຖືກຕ້ອງຕາມຫຼັກວິຊາການ ແນໃສ່ ຍົກລະດັບການຜະລິດພືດໃຫ້ມີປະສິດທິຜົນສູງ, ຮັບປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການຜະລິດພືດເປັນສິນຄ້າ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## II. ຄວາມໝາຍຂອງການດໍາເນີນທຸລະກິດເມັດພັນພືດ.

ການດໍາເນີນທຸລະກິດເມັດພັນພືດ ແມ່ນການດໍາເນີນກິດຈະການກ່ຽວກັບການຜະລິດ, ການນໍາເຂົ້າສົ່ງອອກ, ສົ່ງອອກຕໍ່, ສົ່ງຜ່ານ,ຈໍາໜ່າຍ ແລະ ທຸລະກິດອື່ນ ກ່ຽວກັບເມັດພັນພືດ.

## III. ຫຼັກການ, ເງື່ອນໄຂ, ວິທີການ ແລະ ຂັ້ນຕອນ ການຂໍອະນຸຍາດດໍາເນີນທຸລະກິດເມັດພັນພືດ

### 1. ຫຼັກການ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນທຸລະກິດເມັດພັນພືດ ຕາມທີ່ກໍານົດໄວ້ໃນໂຮແມ່ງ II ຂອງຄໍາແນະນໍາສະບັບນີ້ ຕ້ອງຂໍອະນຸຍາດຈາກກົມປູກຝັງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຕາມທີ່ໄດ້ກໍານົດໄວ້ໃນຄໍາແນະນໍາສະບັບນີ້.

### 2. ເງື່ອນໄຂ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈະດໍາເນີນທຸລະກິດເມັດພັນພືດ ຕ້ອງມີເງື່ອນໄຂ ດັ່ງນີ້:

- ມີສະຖານທີ່, ເນື້ອທີ່, ໂຮງງານປຸງແຕ່ງເມັດພັນພືດ, ຫ້ອງວິໄຈ, ສາງເກັບມ້ຽນ, ອຸປະກອນ, ພາຫະນະຮັບໃຊ້ ທີ່ເໝາະສົມໃນການດໍາເນີນກິດຈະການ;
- ມີຖານະການເງິນທີ່ໝັ້ນຄົງ ເພື່ອດໍາເນີນກິດຈະການ ທີ່ໄດ້ຮັບອະນຸຍາດ;
- ມີລະບົບການບໍລິຫານ, ມີບຸກຄະລາກອນທີ່ມີຄວາມຮູ້ດ້ານແນວພັນພືດ ປ້ອງກັນພືດ ແລະ ທຸລະກິດເມັດພັນພືດ;
- ເງື່ອນໄຂອື່ນ ທີ່ເຫັນວ່າຈໍາເປັນ ຕາມການສະເໜີ ຂອງກົມປູກຝັງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ.

### 3. ວິທີການ ແລະ ຂັ້ນຕອນ

#### 3.1 ວິທີການ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດໍາເນີນທຸລະກິດເມັດພັນພືດ ຕ້ອງຍື່ນຄໍາຮ້ອງ ຕາມແບບພິມ ຂອງກົມປູກຝັງ ຫຼື ສາມາດດາວໂຫຼດໄດ້ທີ່ເວບໄຊ ຂອງກົມປູກຝັງ www.doa.maf.gov.la ພ້ອມທັງປະກອບຊຸດເອກະສານຄົບຖ້ວນ ຫາ ກົມປູກຝັງ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ເພື່ອຄົ້ນຄວ້າພິຈາລະນາຕາມລະບຽບຫຼັກການ ເຊິ່ງເອກະສານປະກອບມີ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດ ຕາມແບບພິມ ທີ່ກົມປູກຝັງກໍານົດ (ຕາມເອກະສານຊ້ອນທ້າຍ 01);
2. ສໍາເນົາ ໃບທະບຽນວິສາຫະກິດ ຫຼື ສໍາເນົາໃບອະນຸຍາດລົງທຶນ;

3. ສຳເນົາ ໃບອະນຸຍາດດຳເນີນກິດຈະການກະສິກຳ ແລະ ປ່າໄມ້;
4. ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ, ໃບມອບສິດຂອງຜູ້ຕາງໜ້າ ໃນກໍລະນີທີ່ໃຫ້ຜູ້ອື່ນມາແລ່ນເອກະສານແທນ;
5. ບົດວິພາກເສດຖະກິດ-ເຕັກນິກ ຫຼື ບົດສະເໜີແຜນການ ຫຼື ໂຄງການ (ຕາມເອກະສານຊ້ອນທ້າຍ 02);
6. ເອກະສານອື່ນ ທີ່ຈຳເປັນຕາມການຮຽກຮ້ອງ ຂອງກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ.

## 3.2 ຂັ້ນຕອນ

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນແລ້ວ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຈະພິຈາລະນາຄວາມຖືກຕ້ອງ ແລະ ຄົບຖ້ວນ ໂດຍປະຕິບັດຕາມຂັ້ນຕອນ ດັ່ງນີ້:

1) ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງແຕ່ງຕັ້ງພະນັກງານລົງກວດກາສະຖານທີ່ປະກອບການ ຂອງແຕ່ລະປະເພດກິດຈະການ ຕາມທີ່ກຳນົດໄວ້ໃນໂຮແມ່ງ II ຂອງຄຳແນະນຳສະບັບນີ້ ພາຍໃນກຳນົດ ຫ້າ ວັນລັດຖະການ ພ້ອມທັງເຮັດບົດບັນທຶກຮ່ວມກັບຜູ້ສະເໜີດຳເນີນທຸລະກິດເມັດພັນພືດ;
2) ພະນັກງານທີ່ຖືກແຕ່ງຕັ້ງ ຕ້ອງເຮັດບົດລາຍງານ ກ່ຽວກັບ ການກວດກາສະຖານທີ່ປະກອບການ ຕໍ່ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພາຍໃນກຳນົດ ຫ້າວັນລັດຖະການ ເພື່ອເປັນຂໍ້ມູນກ່ອນການອະນຸຍາດດຳເນີນທຸລະກິດເມັດພັນພືດ, ໃນກໍລະນີ ເຫັນວ່າບໍ່ສອດຄ່ອງກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນໂຮແມ່ງ III ຂໍ້ 2 ຂອງຄຳແນະນຳສະບັບນີ້ ຕ້ອງແຈ້ງຕໍ່ຜູ້ສະເໜີດຳເນີນທຸລະກິດຊາບ ຢ່າງເປັນລາຍລັກອັກສອນ;
3) ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຈະພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດເມັດພັນພືດ ພາຍໃນ ຫ້າ ວັນລັດຖະການ;
4) ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດເມັດພັນພືດໄດ້ຕາມກຳນົດເວລາດັ່ງກ່າວ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ໃຫ້ຜູ້ຂໍອະນຸຍາດຊາບ.

## IV. ໃບອະນຸຍາດດຳເນີນທຸລະກິດເມັດພັນພືດ

ໃບອະນຸຍາດດຳເນີນທຸລະກິດເມັດພັນພືດ ມີອາຍຸການນຳໃຊ້ ສອງ ປີ ແລະ ສາມາດຕໍ່ໄດ້.

ກ່ອນໃບອະນຸຍາດດຳເນີນທຸລະກິດເມັດພັນພືດ ຈະໝົດອາຍຸການນຳໃຊ້ ສາມສິບ ວັນ ຜູ້ດຳເນີນທຸລະກິດ ຕ້ອງຍື່ນຄຳຮ້ອງຂໍຕໍ່ອາຍຸການນຳໃຊ້ ນຳກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ. ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕ້ອງພິຈາລະນາການຕໍ່ ຫຼື ບໍ່ຕໍ່ໃບອະນຸຍາດດຳເນີນທຸລະກິດ ພາຍໃນກຳນົດເວລາ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບໃບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ໃບອະນຸຍາດດຳເນີນທຸລະກິດ ເສຍຫາຍ ຫຼື ຖືກທຳລາຍ ຜູ້ໄດ້ຮັບໃບອະນຸຍາດ ຕ້ອງແຈ້ງຕໍ່ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໂດຍໃຫ້ປະກອບເອກະສານຂໍຮັບໃບອະນຸຍາດຄືນໃໝ່ ພາຍໃນກຳນົດເວລາ ສິບຫ້າ ວັນ ນັບແຕ່ວັນທີ່ໃບອະນຸຍາດ ເສຍຫາຍ ຫຼື ຖືກທຳລາຍ ເປັນຕົ້ນໄປ. ຖ້າກາຍກຳນົດເວລາດັ່ງກ່າວ ຖືວ່າເປັນການສະຫຼະສິດ.

## V. ການຈັດຕັ້ງປະຕິບັດ

1. ໃຫ້ພະແນກລົງທຶນດ້ານການປູກຝັງ ແລະ ຂະແໜງປູກຝັງ ຂັ້ນແຂວງ ເປັນເຈົ້າການ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ໃຫ້ ພະແນກລົງທຶນດ້ານການປູກຝັງ ແລະ ຂະແໜງປູກຝັງ ຂັ້ນແຂວງ ເປັນເຈົ້າການໃນການຄົ້ນຄວ້າ ການດຳເນີນທຸລະກິດເມັດພັນພືດ ຕາມທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ເພື່ອສະເໜີການນຳຂອງກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພິຈາລະນາອອກໃບອະນຸຍາດ;
3. ໃຫ້ ພະແນກລົງທຶນດ້ານການປູກຝັງ ປະສານສົມທົບກັບ ຂະແໜງປູກຝັງ ຂັ້ນແຂວງ ລົງກວດກາສະຖານທີ່ປະກອບການ ຂອງແຕ່ລະປະເພດກິດຈະການ ຕາມທີ່ກຳນົດໄວ້ໃນໂຮແມ່ງ II ຂອງຄຳແນະນຳສະບັບນີ້;
4. ໃຫ້ ພະແນກລົງທຶນດ້ານການປູກຝັງ ປະສານສົມທົບກັບ ຂະແໜງປູກຝັງ ຂັ້ນແຂວງ ຈັດຝຶກອົບຮົມ ແລະ ຄຸ້ມຄອງຜູ້ປະກອບການ ທີ່ດຳເນີນທຸລະກິດເມັດ

ພັນພືດ ຕາມທີ່ກຳນົດໄວ້ໃນໂຣແມ່ງ II ຂອງຄຳແນະນຳສະບັບນີ້ ແລະ ແຈ້ງລາຍຊື່ຈຳນວນຜູ້ປະກອບການ ດັ່ງກ່າວ ໃຫ້ກົມປູກຝັງ ຊາບເປັນແຕ່ລະໄລຍະ;

5. ໃຫ້ ຜູ້ດຳເນີນທຸລະກິດເມັດພັນພືດ ຕາມທີ່ກຳນົດໄວ້ໃນໂຣແມ່ງ II ຂອງຄຳແນະນຳສະບັບນີ້ ເປັນຜູ້ຮັບຜິດຊອບໃນການເສຍຄ່າທຳນຽມ, ຄ່າບໍລິການດ້ານວິຊາການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ໃຫ້ ຂະແໜງປູກຝັງ ຂັ້ນແຂວງ ປະສານສົມທົບກັບ ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງເປັນເຈົ້າການໃນການຊຸກຍູ້, ຕິດຕາມກວດກາ ການຈັດຕັ້ງປະຕິບັດ ການດຳເນີນທຸລະກິດເມັດພັນພືດ ຕາມທີ່ກຳນົດໄວ້ໃນໂຣແມ່ງ II ຂອງຄຳແນະນຳສະບັບນີ້;
7. ຜ່ານການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້, ມີຂໍ້ສະດວກ, ຂໍ້ຫຍຸ້ງຍາກແນວໃດ ໃຫ້ລາຍງານກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອພິຈາລະນາແກ້ໄຂຢ່າງທັນການ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າກົມ**

ບຸນຈັນ ກົມບຸນຍະສິດ

# ເອກະສານຊ້ອນທ້າຍ 01

## 1. ການນຳເຂົ້າເມັດພັນພືດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ນຳເຂົ້າເມັດພັນພືດ ຕ້ອງຂໍອະນຸຍາດຈາກ ກະຊວງກະສິກຳ ແລະ ປ່າໄມ້. ການນຳເຂົ້າເມັດພັນພືດ ແຕ່ລະຄັ້ງຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1) ເປັນແນວພັນທີ່ໄດ້ຮັບການຂຶ້ນທະບຽນ ຢູ່ ສປປ ລາວ ແລະ ບໍ່ນອນໃນບັນຊີເຊື້ອພັນພືດຕ້ອງຫ້າມ ຂອງປະເທດຕົ້ນທາງ;
2) ໃບຢັ້ງຢືນສຸຂານາໄມພືດ ຈາກປະເທດຕົ້ນທາງ;
3) ໃບຢັ້ງຢືນຄຸນນະພາບເມັດພັນພືດ ຈາກປະເທດຕົ້ນທາງ.

ສຳລັບ ຂັ້ນຕອນການອະນຸຍາດນຳເຂົ້າເມັດພັນພືດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## 2. ການສົ່ງອອກ ແລະ ການສົ່ງອອກຕໍ່ ເມັດພັນພືດ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສົ່ງອອກ ແລະ ສົ່ງອອກຕໍ່ເມັດພັນພືດ ຕ້ອງຂໍອະນຸຍາດຈາກກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ແຂວງ. ການສົ່ງອອກ ແລະ ສົ່ງອອກຕໍ່ເມັດພັນພືດ ແຕ່ລະຄັ້ງ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1) ເປັນແນວພັນພືດທີ່ໄດ້ຮັບການຂຶ້ນທະບຽນ ບໍ່ນອນໃນບັນຊີເຊື້ອພັນພືດຕ້ອງຫ້າມຂອງ ສປປ ລາວ;
2) ໃບຢັ້ງຢືນສຸຂານາໄມພືດ;
3) ເງື່ອນໄຂອື່ນ ທີ່ປະເທດປາຍທາງກຳນົດ.

ສຳລັບຂັ້ນຕອນໃນການອະນຸຍາດສົ່ງອອກ ແລະ ສົ່ງອອກຕໍ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**3. ການສົ່ງຜ່ານເມັດພັນພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຈຸດປະສົງ ສົ່ງຜ່ານເມັດພັນພືດຕ້ອງຂໍອະນຸຍາດຈາກກະຊວງກະສິກຳ ແລະ ປ່າໄມ້. ການສົ່ງຜ່ານເມັດພັນພືດແຕ່ລະຄັ້ງຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1) ເປັນແນວພັນທີ່ບໍ່ນອນໃນບັນຊີແຫຼ່ງເຊື້ອພັນພືດຕ້ອງຫ້າມ ຂອງປະເທດຕົ້ນທາງ;

2) ໃບຢັ້ງຢືນສຸຂານາໄມພືດຈາກປະເທດຕົ້ນທາງ;

3) ໃບຢັ້ງຢືນຄຸນນະພາບເມັດພັນພືດຈາກປະເທດຕົ້ນທາງ.

ສຳລັບຂັ້ນຕອນການອະນຸຍາດສົ່ງຜ່ານເມັດພັນພືດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**4. ການຈຳໜ່າຍ**

ການຈຳໜ່າຍເມັດພັນພືດຕ້ອງປະຕິບັດດັ່ງນີ້:

1) ຕ້ອງຂໍອະນຸຍາດຈຳໜ່າຍເມັດພັນພືດ ຕາມທີ່ກຳນົດໄວ້ໃນດຳລັດສະບັບນີ້;

2) ຮັບປະກັນ ການບັນຈຸ, ຫຸ້ມຫໍ່, ຕິດສະຫຼາກເມັດພັນພືດຢ່າງປອດໄພ;

3) ມີການເກັບຮັກສາ ແລະ ຂົນສົ່ງເມັດພັນພືດ ຢ່າງຖືກຕ້ອງຕາມເຕັກນິກ;

4) ຈຳໜ່າຍເມັດພັນພືດຕາມທີ່ໄດ້ຂຶ້ນທະບຽນໄວ້;

5) ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ກວດກາແນວພັນພືດໃນການກວດກາຄຸນນະພາບເມັດພັນພືດ.

# ເອກະສານຊ້ອນທ້າຍ 02

## ໂຄງຮ່າງການຂຽນບົດວິພາກເສດຖະກິດ-ເຕັກນິກ ທຸລະກິດເມັດພັນພືດ

**I. ສະພາບລວມຂອງໂຄງການ**

**1. ແຜນການລວມ**

1.1 ແຜນງານ, ຊື່ໂຄງການ, ຊື່ ແລະ ນາມສະກຸນ, ເບີໂທເຈົ້າຂອງໂຄງການ, ທີ່ຕັ້ງສຳນັກງານຫ້ອງການ, ທີ່ຕັ້ງໂຄງການ, ຂອບເຂດພື້ນທີ່, ມູນຄ່າການລົງທຶນ ກຳນົດໄລຍະເວລາຂອງໂຄງການ ແລະ ຕ້ອງອະທິບາຍລະອຽດ ກ່ຽວກັບຜູ້ທີ່ໄດ້ຮັບຜົນປະໂຫຍດທາງກົງ ຄື: ພາກລັດຈະໄດ້ຜົນປະໂຫຍດຫຍັງ, ປະຊາຊົນຜູ້ທີ່ເຂົ້າຮ່ວມໂຄງການ, ຜູ້ທີ່ດຳລົງຊີວິດໃນຂອບເຂດໂຄງການ ຫລື ໃກ້ກັບເຂດພັດທະນາໂຄງການ ຈະໄດ້ຮັບຜົນປະໂຫຍດຈາກໂຄງການແນວໃດ ແລະ ຜູ້ລົງທຶນຈະໄດ້ຮັບຜົນປະໂຫຍດຫຍັງແດ່. ພ້ອມດຽວກັນນັ້ນຕ້ອງໄດ້ລະບຸຜົນປະໂຫຍດທາງອ້ອມຈາກໂຄງການມີແນວໃດ.

1.2 ຈຸດພິເສດ ແລະ ທ່າແຮງໂດຍເນັ້ນໃຫ້ເຫັນ ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການນຳໃຊ້ພື້ນທີ່ ແລະ ປົກປັກຮັກສາສິ່ງແວດລ້ອມ ໃນຂອບເຂດພື້ນທີ່ຂອງໂຄງການ.

**2. ຈຸດປະສົງ ແລະ ລະດັບຄາດໝາຍ ຂອງໂຄງການ**

2.1 ຈຸດປະສົງ: ໂດຍຊີ້ໃຫ້ເຫັນເປົ້າໝາຍ ແລະ ຄວາມຕ້ອງການທີ່ຈະດຳເນີນກິດຈະການຂອງໂຄງການ.

2.2 ລະດັບຄາດໝາຍ: ແມ່ນອະທິບາຍຄວາມອາດສາມາດສູງສຸດທີ່ຈະຕ້ອງບັນລຸເປົ້າໝາຍຂອງໂຄງການ.

**3. ບັນດາກົດໝາຍ ແລະ ລະບຽບການ**

3.1 ແນວທາງນະໂຍບາຍຂອງລັດຖະບານທີ່ກ່ຽວຂ້ອງກັບການລົງທຶນການຜະລິດແນວພັນ ຫຼື ເມັດພັນພືດນັ້ນໆ;

3.2 ບັນດາກົດໝາຍ ແລະ ນິຕິກຳຕ່າງໆ ທີ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ;

## II. ການພັດທະນາໂຄງການ

### 1. ຄວາມເປັນມາ ແລະ ເຫດຜົນຂອງການລົງທຶນ

1.1 ຄວາມເປັນມາ ແລະ ເຫດຜົນຂອງການລົງທຶນ:

ປະຫວັດຄວາມເປັນມາຂອງບໍລິສັດ ຜ່ານມາເຄີຍດຳເນີນກິດຈະການຫຍັງແດ່, ໄດ້ຮັບໃບທະບຽນວິສາຫະກິດສະບັບເລກທີໃດ ເປັນຫຍັງຈຶ່ງຕ້ອງການດຳເນີນກິດຈະການດັ່ງກ່າວ, ມີທ່າແຮງແນວໃດແດ່ ແລະ ທີ່ສຳຄັນພັກ-ລັດມີນະໂຍບາຍແນວໃດ ໃນການພັດທະນາໂຄງການ.

1.2 ສະພາບພື້ນທີ່ໃນເຂດພັດທະນາໂຄງການ

- ຂໍ້ມູນທາງດ້ານກະສິກຳ ເຊັ່ນ: ສະພາບພື້ນທີ່, ພູມສັນຖານ, ຄວາມອຸດົມສົມບຸນຂອງດິນ (ຄ່າ pH ຂອງດິນ), ຄວາມສູງຈາກລະດັບໜ້ານ້ຳທະເລ ອຸນຫະພູມ, ຄວາມຊຸ່ມ, ແສງແດດ ປະລິມານນ້ຳຝົນແຫຼ່ງນ້ຳ ແລະ ອື່ນໆ);
- ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ.

1.3 ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍອື່ນໆ ໃນການດຳເນີນໂຄງການ.

### 2. ສັງເກດຕີລາຄາລວມຂອງໂຄງການ

2.1 ວິທີການຈັດຕັ້ງປະຕິບັດ

ກຳນົດວິທີການຈັດຕັ້ງປະຕິບັດໃຫ້ລະອຽດ ວ່າຈະຈັດຕັ້ງປະຕິບັດແນວໃດໃນການພັດທະນາໂຄງການ ເພື່ອໃຫ້ໄດ້ຮັບຜົນປະໂຫຍດສູງສຸດ ແລະ ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນທີ່ວາງໄວ ແລະ ທີ່ສຳຄັນໃນກໍລະນີເປັນໂຄງການສົ່ງເສີມ ຄວນມີການສ້າງຕັ້ງກຸ່ມການຜະລິດໂດຍມີສັນຍາຜູກພັນສອງຝ່າຍເປັນຂໍ້ຜູກມັດ.

2.2 ຮູບການລົງທຶນ

- ກຳນົດທຶນທັງໝົດ, ທຶນຈົດທະບຽນ ໃນນັ້ນ, ຕ້ອງແຍກໃຫ້ເຫັນ ທຶນຄົງທີ່ ແລະ ທຶນໝູນວຽນ;

- ລະບຸແຫຼ່ງທີ່ມາຂອງທຶນທັງໝົດ ເປັນຕົ້ນແຫຼ່ງທຶນຂອງຕົນເອງ, ຈາກການລະດົມຫຸ້ນ, ຈາກການກູ້ຢືມທະນາຄານ ແລະ ອື່ນໆ.

2.3 ການຄິດໄລ່ງົບປະມານຄ່າໃຊ້ຈ່າຍ ຕົ້ນທຶນໝູນວຽນ

- ເງິນເດືອນ, ເບ້ຍລ້ຽງ, ເງິນອຸດໜູນ ແລະ ຄ່າແຮງງານອື່ນໆ ຕາມທີ່ລະບຸໃນສັນຍາ (ໃຫ້ຄິດໄລ່ລະອຽດ);
- ການຄິດໄລ່ ພັນທະເສຍພາສີອາກອນຕ່າງໆ (ໃຫ້ຄິດໄລ່ລະອຽດ);
- ຄ່າບຸກເບີກພື້ນທີ່ ແລະ ກຽມດິນ (ໃຫ້ຄິດໄລ່ລະອຽດ);
- ຄ່າປັດໄຈການຜະລິດ (ແນວພັນ, ຝຸ່ນ ແລະ ຢາປາບສັດຕູພືດ), ຖ້າມີການນຳເຂົ້າ ໃຫ້ປະຕິບັດຕາມລະບຽບກົດໝາຍ ຂອງ ສປປ ລາວ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

2.4 ຄ່າໃຊ້ຈ່າຍຕົ້ນທຶນຄົງທີ່

- ປຸກສ້າງສຳນັກງານ, ຫ້ອງການ, ເຮືອນພັກກຳມະກອນ, ເຄື່ອງກົນຈັກ ແລະ ໂຮງງານປຸງແຕ່ງຕ່າງໆ (ໃຫ້ຄິດໄລ່ລະອຽດ);
- ພາຫານະຮັບໃຊ້ ແລະ ເຄື່ອງໃຊ້ທີ່ຈຳເປັນໃນຫ້ອງການ (ໃຫ້ຄິດໄລ່ລະອຽດ ຈຳນວນພາຫານະ, ເຄື່ອງໃຊ້ໃນຫ້ອງການ);

2.5 ຮູບແບບການຄຸ້ມຄອງໂຄງການ

- ໂຄງຮ່າງການຈັດຕັ້ງຂອງໂຄງການ (ອະທິບາຍລະອຽດ ໜ້າທີ່ຮັບຜິດຊອບຂອງແຕ່ລະໜ່ວຍງານ);
- ກົດລະບຽບຂອງໂຄງການ (ໃຫ້ຂຽນລະອຽດ);
- ມີນັກວິຊາການທີ່ຮັບຜິດຊອບໃນແຕ່ລະດ້ານ (ຕ້ອງລະບຸປະຫວັດຂອງນັກວິຊາການ, ໜັງສືສັນຍາ ລະຫວ່າງ ວິຊາການ ກັບ ບໍລິສັດ ແລະ ຖ້າມີໃບຢັ້ງຢືນຂອງວິຊາການ ແມ່ນໃຫ້ຄັດຕິດເປັນເອກະ ສານຊ້ອນທ້າຍ).

2.6 ການນຳໃຊ້ແຮງງານຂອງໂຄງການ

ຕ້ອງລະບຸ ຫຼື ຄາດຄະເນຈຳນວນແຮງງານ, ທີ່ມາຂອງແຮງງານ ແລະ ຄວາມຕ້ອງການແຮງງານໃນການພັດທະນາໂຄງການ ໂດຍອີງໃສ່ ກົດໝາຍວ່າດ້ວຍ ແຮງານ ຂອງ ສປປ ລາວ;

## 3. ການພັດທະນາດ້ານເຕັກນິກວິຊາການ

3.1 ດ້ານການປູກ

ຈຸດພິເສດ ແລະ ຄວາມເປັນມາຂອງພືດ ທີ່ຈະດຳເນີນກິດຈະການ, ຊື່ສາມັນ, ຊື່ວິທະຍາສາດຕະກຸນ, ຄຸນປະໂຫຍດ ແລະ ຄຸນລັກສະນະທາງສາລິລະວິທະຍາຂອງພືດ, ຜົນຜະລິດຕໍ່ເຮັກຕາ ແລະ ອື່ນໆ.

1) ການເລືອກພື້ນທີ່: ສະພາບພື້ນທີ່, ຄວາມອຸດົມສົມບູນຂອງດິນ, ລະດັບຄວາມເປັນກົດເປັນດ່າງຂອງດິນ (pH) ແລະ ສະພາບດິນຟ້າອາກາດ ທ່າແຮງທາງດ້ານຊັບພະຍາກອນທຳມະຊາດ;

2) ຊະນິດແນວພັນທີ່ນຳມາປູກ: ຊື່ ແລະ ຊະນິດຂອງແນວພັນ, ຄວາມອາດສາມາດຂອງຜົນຜະລິດ ແລະ ແຫຼ່ງທີ່ມາຂອງແນວພັນ;

3) ລະດູການປູກ: ຊວງໄລຍະເວລາທີ່ເໝາະສົມ ເດືອນ, ປີ ຂອງການປູກພືດເປົ້າໝາຍການລົງທຶນ;

4) ການກຽມດິນ: ຮູບແບບວິທີການກຽມດິນ;

5) ການປູກ: ເຕັກນິກວິທີການປູກ;

6) ການບົວລະບັດຮັກສາ: ການໃຫ້ນໍ້າ, ການໃສ່ຝຸ່ນ, ການເສຍຫຍ້າ, ການປ້ອງກຳຈັດສັດຕູພືດ ແລະ ອື່ນໆ;

7) ວິທະຍາການຫຼັງເກັບກ່ຽວ: ຂັ້ນຕອນ, ວິທີການເກັບກ່ຽວ, ປຸງແຕ່ງ ແລະ ເກັບຮັກສາ:

- ການເກັບກ່ຽວ: ເກັບກ່ຽວດ້ວຍແຮງງານຄົນ ຫຼື ກົນຈັກ;
- ການປຸງແຕ່ງ: ປຸງແຕ່ງໃນລະດັບໃດ (ສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ) ອະທິບາຍ ຂັ້ນຕອນຂອງການປຸງແຕ່ງ;
- ການເກັບຮັກສາ: ມີສາງເກັບມ້ຽນ.

8) ການຫຸ້ມຫໍ່: ວິທີການຫຸ້ມຫໍ່ ພາຍຫຼັງເກັບກ່ຽວ ຫຼື ການປຸງແຕ່ງ;

9) ການຂົນສົ່ງ: ນັບແຕ່ພື້ນທີ່ການຜະລິດ ຈົນເຖິງຕະຫຼາດຈຳໜ່າຍ;

**4. ດ້ານການຕະຫຼາດ**

ການເຂົ້າເຖິງຕະຫຼາດຂອງສິນຄ້າ ແລະ ເປົ້າໝາຍຂອງຕະຫຼາດຈຳໜ່າຍພາຍໃນ ຫຼື ສົ່ງອອກຕ່າງປະເທດ (ຕ້ອງລະບຸປະເທດສົ່ງອອກ) ແລະ ຕ້ອງປະຕິບັດຕາມລະບຽບການ ຂອງປະເທດປາຍທາງ.

## IV. ຕີລາຄາຜົນຂອງການດຳເນີນໂຄງການ

**1. ແຜນການດຳເນີນໂຄງການ.**

1.1 ສ້າງຕາຕະລາງ ຄາດຄະເນ ການໃຊ້ຈ່າຍໃນແຕ່ລະປີໃຫ້ລະອຽດ;

1.2 ສ້າງຕາຕະລາງ ແຜນການປູກ, ການຜະລິດ ໃນແຕ່ລະປີໃຫ້ລະອຽດ;

1.3 ແຜນການການປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມໃນພື້ນທີ່ໂຄງການ;

1.4 ສ້າງຕາຕະລາງ ຄາດຄະເນຄວາມຕ້ອງການຕົ້ນທຶນການຜະລິດ ໃນ 1 ເຮັກຕາ ໂດຍຍົກໃຫ້ເຫັນລາຍການໆນຳໃຊ້ປັດໄຈການຜະລິດ, ຈຳນວນ ງົບປະມານ, ລາຍຮັບ, ລາຍຈ່າຍ ແລະ ປະສິດທິຜົນຂອງການລົງທຶນລະອຽດ;

1.5 ສ້າງຕາຕະລາງ ຄາດຄະເນຕົ້ນທຶນ, ລາຍຮັບ ແລະ ກຳໄລແຕ່ລະປີ ຕາມອາຍຸໂຄງການ ໂດຍຍົກໃຫ້ເຫັນເຖິງເນື້ອທີ່, ມູນຄ່າການລົງທຶນ, ສະມັດຕະພາບຜົນຜະລິດ, ຜົນຜະລິດລວມ, ລາຄາເກັບຊື້, ລາຍຮັບ ແລະ ກຳໄລໃນແຕ່ລະປີໃຫ້ລະອຽດ;

1.6 ຜົນຕອບແທນລະດັບໂຄງການໃນແຕ່ລະປີ ຕາມອາຍຸໂຄງການ;

## 2. ລະບົບການລາຍງານ, ການຊຸກຍູ້ຕິດຕາມ ຂອງພາກລັດ ແລະ ການປະກອບສ່ວນສັງຄົມ

2.1 ລະບົບການລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການ

ລາຍງານປົກກະຕິທຸກໆ 3 ເດືອນ, 6 ເດືອນ ແລະ ປະຈຳປີ ໃຫ້ແກ່ຂະແໜງການປູກຝັງແຂວງ, ນະຄອນຫຼວງ ທີ່ໂຄງການຈັດຕັ້ງປະຕິບັດ ແລະ ລາຍງານປະຈຳປີ ຫາກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.

2.2 ລະບົບການຊຸກຍູ້ຕິດຕາມ

ແຜນການລົງຊຸກຍູ້, ຕິດຕາມຂອງພະນັກງານພາກລັດທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ, ຂັ້ນສູນກາງ ໃຫ້ລະອຽດໂດຍກຳນົດເວລາ, ແຜນຄົນ, ແຜນງານ ແລະ ແຜນງົບປະມານ.

ໃນກໍລະນີ ບໍລິສັດປະສົບບັນຫາໃດໜຶ່ງທີ່ມີຄວາມຕ້ອງການ ທາງດ້ານພະນັກງານວິຊາການ ຈາກພາກລັດໃຫ້ເຂົ້າມາຊ່ວຍ ບໍລິສັດຈະຕ້ອງຮັບຜິດຊອບທາງດ້ານງົບປະມານ ໃນການລົງຕິດຕາມ, ຊ່ວຍເຫຼືອທັງໝົດ.

2.3 ການຊ່ວຍເຫຼືອສັງຄົມ

ການປະກອບສ່ວນໃນການພັດທະນາ ກໍ່ສ້າງພື້ນຖານໂຄງລ່າງ (ຖະໜົນ ໂຮງຮຽນ, ໂຮງໝໍ, ເຮືອນຊານ, ເຄື່ອງຮັບໃຊ້ອື່ນໆ) ໃນຂອບເຂດໂຄງການ ໃຫ້ສ້າງຕາຕະລາງ ແຜນການປະກອບສ່ວນລະອຽດໃນແຕ່ລະປີ.

2.4 ແຜນພັດທະນາ ແລະ ປົກປັກຮັກສາສິ່ງແວດລ້ອມ

ໂຄງການມີແຜນການພັດທະນາ ແລະ ຟື້ນຟູ ພື້ນທີ່ໂຄງການແນວໃດ ຫຼັງຈາກສິ້ນສຸດໂຄງການຕ້ອງຂຽນແຜນການຈັດຕັ້ງປະຕິບັດການຟື້ນຟູ ພື້ນທີ່ໃຫ້ລະອຽດ.

## 3. ສະຫຼຸບໂດຍຫຍໍ້ຄາດຄະເນຜົນໄດ້ຮັບຈາກໂຄງການ

- ມູນຄ່າຂອງການລົງທຶນທັງໝົດຂອງໂຄງການ;
- ເນື້ອທີ່ປູກທັງໝົດ;
- ໄລຍະດຳເນີນໂຄງການ;
- ຕົ້ນທຶນການຜະລິດສະເລ່ຍ ຕໍ່ 1 ເຮັກຕາ;

- ຄາດຄະເນ ລາຍຮັບທັງໝົດຂອງການລົງທຶນ ຕາມອາຍຸໂຄງການ;
- ຜົນຕອບແທນໂຄງການ ຕາມອາຍຸໂຄງການລົງທຶນ (Benifit Cost.. Ratio (B/C Ratio);
- ໄລຍະເວລາຄືນທຶນ (Payback Period = BP);
- ມູນຄ່າປະຈຸບັນສຸດທິ (Net Present Value = NPV);
- ວິເຄາະປະສິດທິຜົນຂອງໂຄງການ (Internal Rate of Return = IRR);
- ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີ.

**5. ບົດວິພາກເສດຖະກິດ-ເຕັກນິກ ການຜະລິດເມັດພັນພືດ ຕ້ອງປະກອບມີເອກະສານຊ້ອນທ້າຍ ດັ່ງລຸ່ມນີ້:**

- ແຜນທີ່ສະແດງຂອບເຂດໂຄງການ;
- ໃບທະບຽນວິສາຫະກິດ;
- ໃບທະບຽນອາກອນ;
- ມີໜັງສືສັນຍາສອງຝ່າຍ ລະຫວ່າງ ບໍລິສັດ ກັບ ປະຊາຊົນຜູ້ຜະລິດ (ສັນຍາການຜະລິດ ແລະ ສັນຍາເກັບຊື້) ໂດຍຢັ້ງຢືນຈາກອຳນາດການປົກຄອງບ້ານ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ (ສຳລັບການລົງທຶນສົ່ງເສີມປະຊາຊົນຮູບແບບ 2+3);
- ກົດລະບຽບ ຂອງບໍລິສັດ.

ສະໜັບສະໜູນການຈັດພິມ ໂດຍ:

ກົມປູກຝັງ ແລະ ອົງການ ອ໊ອກສຟາມ

Printed with Cooperation and Support from

The Department of Agriculture and The OXFAM